ຄູ່ມືສຳລັບພໍ່ແມ່ ແລະ
ຜູ້ນຳຂອງຊາວໜຸ່ມ

© 2008 ໂດຍ Intellectual Reserve, Inc.
ສະຫງວນລິຂະສິດທຸກປະການ
ຈັດພິມໃນສະຫະລັດອາເມລິກາ

ສະບັບເປັນພາສາອັງກິດໄດ້ຮັບອະນຸຍາດ: 1/04
ການແປໄດ້ຮັບອະນຸຍາດ: 1/04
ແປຈາກ *Guidebook for Parents and Leaders of Youth (International Version)*
Laotian

ສາລະບານ

ຂ່າວສານຈາກຝ່າຍປະທານສູງສຸດ 1

ບົດບາດຂອງພໍ່ແມ່ 3

ບົດບາດຂອງຜູ້ນຳ 5

ສຳລັບຄວາມເຂັ້ມແຂງຂອງຊາວໜຸ່ມ 7

ລາຍການໜ້າທີ່ຂອງຖານະປະໂລຫິດແຫ່ງອາໂລນຕໍ່ພະເຈົ້າ 9

ພາບສຳລວມ 9

ໂຄງການຮັບໃຊ້ໜ້າທີ່ຕໍ່ພະເຈົ້າ 11

ກິດຈະກຳໜ້າທີ່ຕໍ່ພະເຈົ້າສຳລັບຊາວໜຸ່ມ 11

ລູກເສືອ 11

ໃບຍ້ອງຍໍ ແລະ ລາງວັນ 12

ການຮັກສາບັນທຶກ 13

ການປັບປຸງໃຫ້ເຂົ້າກັບບຸກຄົນ ແລະ ຄວາມຕ້ອງການໃນທ້ອງຖິ່ນ 13

ໜ້າທີ່ຮັບຜິດຊອບຂອງຜູ້ນຳ 14

ລາຍການເພື່ອຄວາມກ້າວໜ້າສ່ວນຕົວຂອງຍິງໜຸ່ມ 15

ພາບສຳລວມ 15

ປະສົບການ ແລະ ໂຄງການທີ່ມີຄຸນຄ່າ 17

ຄວາມກ້າວໜ້າສ່ວນຕົວໃນກິດຈະກຳຂອງຊາວໜຸ່ມ 18

ເຄື່ອງໝາຍ, ໃບຍ້ອງຍໍ, ແລະ ການຮັບຮູ້ 18

ຂໍ້ຮຽກຮ້ອງຄວາມກ້າວໜ້າສ່ວນຕົວສຳລັບຜູ້ນຳ 19

ການປັບປຸງໃຫ້ເຂົ້າກັບບຸກຄົນ ແລະ ຄວາມຕ້ອງການໃນທ້ອງຖິ່ນ 19

ໜ້າທີ່ຮັບຜິດຊອບຂອງຜູ້ນຳ 20

ກິດຈະກຳສຳລັບຊາວໜຸ່ມ 21
ຈຸດປະສົງ 21
ການວາງແຜນ 21
ຈຳນວນ ແລະ ໂຄງร่างกิดจะกำสำลับชาวหนุ่ม 22
ຫົວຂໍ້ປະຈຳປີ 24
ແຫລ່ງອ້າງອີງເພີ່ມເຕີມ 24
ການສອນຫລັກຄຳຂອງການເປັນຜູ້ນຳຕໍ່ຊາວໜຸ່ມ 26

ໃນຄູ່ມືເຫລັ່ມນີ້, ຄຳว่า *ປະທານສະເຕກ* ແລະ *ອະທິການ* ກໍໝາຍເຖິງ *ປະທານ ຫ້ອງຫົ່ນ* ແລະ *ປະທານ ສາຂາ* ຄືກັນ, ແລະ ຄຳว่า *ສະເຕກ* ແລະ *ຫວອດ* ກໍໝາຍ ເຖິງ *ຫ້ອງຫົ່ນ* ແລະ *ສາຂາ* ຄືກັນ.

ຂ່າວສານຈາກຝ່າຍປະທານສູງສຸດ

ເຖິງພໍ່ແມ່ ແລະ ຜູ້ນຳຂອງຊາວໜຸ່ມທີ່ຮັກແພງ:

ພວກເຮົາຮັກຊາວໜຸ່ມຂອງສາດສະໜາຈັກ. ພວກເຮົານັບຖື ແລະ ຊົມເຊີຍບຸດ ແລະ ທິດາທີ່ເສດເຫລົ່ານີ້ຂອງພະບິດາເທິງສະຫວັນ. ເຂົາເຈົ້າຈະເປັນພໍ່ແມ່ ແລະ ຜູ້ນຳ ໃນອະນາຄົດຂອງສາດສະໜາຈັກ. ຄຳອະທິຖານຂອງພວກເຮົາຄື ເຮົາ ໃນຖານະ ທີ່ເປັນພໍ່ແມ່ ແລະ ຜູ້ນຳ ຈະສາມາດຊ່ວຍເຂົາໃຫ້ແນ່ວແນ່ຢູ່ກັບຄວາມຈິງ ແລະ ຊື່ສັດຕໍ່ພະກິດຕິຄຸນຂອງພະເຢຊູຄິດ.

ພວກເຮົາຢາກໃຫ້ຄົນໜຸ່ມຂອງສາດສະໜາຈັກເປັນຜູ້ຮັບໃຊ້ທີ່ກ້າຫານ ແລະ ຂອບທຳ ຂອງພະເຈົ້າ, ອຸທິດຕົນໃນການດຳລົງຊີວິດແຕ່ລະວັນເພື່ອຈະສາມາດໄປພະວິຫານ ແລະ ຮັບເອົາພອນອັນຍິ່ງໃຫຍ່ທີ່ສຸດຂອງພະເຈົ້າສຳລັບຕົວເອງ. ສະນັ້ນ, ພວກເຮົາ ຈຶ່ງໄດ້ເລືອກເອົາພະວິຫານມາເປັນເຄື່ອງໝາຍສຳລັບຊາວໜຸ່ມຂອງສາດສະໜາຈັກ.

ປຶ້ມ *ສຳລັບຄວາມເຂັ້ມແຂງຂອງຊາວໜຸ່ມ;* ປຶ້ມ *Aaronic Priesthood: Fulfilling Our Duty to God;* and *Young Women Personal Progress* ຊ່ວຍຊາຍໜຸ່ມ ແລະ ຍິງໜຸ່ມໃຫ້ເຂົ້າໃຈສິ່ງທີ່ພະບິດາເທິງສະຫວັນ ຕ້ອງການໃຫ້ເຂົາເຈົ້າເປັນ. ປຶ້ມເຫລົ່ານີ້ເປັນແຫລ່ງຊ່ວຍເຫລືອສຳລັບທ່ານ, ຜູ້ເປັນພໍ່ແມ່ ແລະ ຜູ້ນຳ, ເພື່ອຊ່ວຍຊາວໜຸ່ມໃຫ້ຕຽມຕົວທີ່ຈະຮັບເອົາຂອງປະທານສັກສິດໃນພະວິຫານ, ໄປເຜີຍແຜ່, ແຕ່ງງານໃນພະວິຫານ, ແລະ ເປັນພໍ່ແມ່.

ພວກເຮົາຫວັງว่า ຊາຍໜຸ່ມແຕ່ລະຄົນຈະໄດ້ຮັບລາງວັນໜ້າທີ່ຕໍ່ພະເຈົ້າ. ພວກເຮົາ ຫວັງว่า ຍິງໜຸ່ມທຸກຄົນຈະໄດ້ຮັບການຮັບຮູ້ຄວາມເປັນຍິງໜຸ່ມ. ຂໍ້ກຳນົດສຳລັບການ ໄດ້ຮັບລາງວັນດັ່ງກ່າວເປັນສິ່ງທ້າທາຍ ແລະ ເປັນສິ່ງເນື່ອງພໃຈຫລາຍ. ພວກເຮົາ ມີຄວາມກະຕັນຍູຕໍ່ພໍ່ແມ່ ແລະ ຜູ້ນຳທີ່ໄດ້ຊ່ວຍຊາວໜຸ່ມໃຫ້ໄດ້ຮັບສິ່ງເຫລົ່ານີ້.

ຂໍພະຜູ້ເປັນເຈົ້າຈົ່ງປະທານພອນໃຫ້ທ່ານ ໃນຂະນະທີ່ທ່ານຊ່ວຍຊາວໜຸ່ມຂອງ
ສາດສະໜາຈັກກ້າວໄປໜ້າເພື່ອຮັບເອົາໜ້າທີ່ຮັບຜິດຊອບອັນຍິ່ງໃຫຍ່ທີ່ລໍຖ້າເຂົາຢູ່.

ຝ່າຍປະທານສູງສຸດ

ບົດບາດຂອງພໍ່ແມ່

ລູກຊາຍ ແລະ ລູກສາວຂອງທ່ານເປັນ ລູກໆຂອງພະເຈົ້າຜູ້ທີ່ມີຄວາມສາມາດ ຫລາຍທີ່ສຸດ. ເຖິງແມ່ນว່າ ສາດສະໜາ ຈັກມີຜູ້ນຳ ແລະ ແຫລ່ງຊ່ວຍເຫລືອຢ່າງ ຫລວງຫລາຍເພື່ອຊ່ວຍເຫລືອເຂົາ, ແຕ່ ທ່ານ ໃນຖານະທີ່ເປັນພໍ່ແມ່ຂອງເຂົາ ມີໜ້າທີ່ຮັບຜິດຊອບຕົ້ນຕໍທີ່ຈະຊ່ວຍ ເຫລືອເຂົາໃຫ້ບັນລຸຄວາມສຳເລັດ. ລາຍການຂອງສາດສະໜາຈັກ ແລະ ອຸບປະກອນສຳລັບຊາວໜຸ່ມ, ເຊິ່ງໄດ້ບົ່ງບອກໄວ້ຢູ່ໃນຄູ່ມືເຫລັ້ມນີ້, ໄດ້ຖືກຈັດໄວ້ ເພື່ອຊ່ວຍທ່ານ ໃນຂະນະທີ່ທ່ານຊ່ວຍລູກໆຂອງທ່ານພັດທະນາຄວາມຊຳນານ ແລະ ຄຸນສົມບັດທີ່ຈຳເປັນຕໍ່ຄວາມສຳເລັດໃນຊີວິດ.

ຕໍ່ໄປນີ້ຄືວິທີທີ່ບາງຢ່າງທ່ານສາມາດຊ່ວຍເຫລືອລູກຊາຍ ແລະ ລູກສາວຂອງທ່ານ ໃນການຮັບເອົາຕົນປະໂຫຍດທີ່ສູງສຸດຈາກລາຍການ ແລະ ອຸບປະກອນສຳລັບ ລາຍການຂອງຊາວໜຸ່ມໃນສາດສະໜາຈັກ.

- ໃຫ້ຮູ້ຈັກຂໍ້ມູນຢູ່ໃນຄູ່ມືເຫລັ້ມນີ້.
- ໃຫ້ຫົບທວນປຶ້ມ *ສຳລັບຄວາມເຂັ້ມແຂງຂອງຊາວໜຸ່ມ* ນຳເຂົາ. ໃຫ້ຫົບທວນປຶ້ມ *Aaronic Priesthood: Fulfilling Our Duty to God* ສຳລັບນັກຄະນະຍົກ, ຄູສອນ, ຫລື ປະໂລຫິດກັບລູກຊາຍຂອງທ່ານ. ໃຫ້ຫົບທວນປຶ້ມ *Young Women Personal Progress* ກັບລູກສາວຂອງທ່ານ.
- ໃຫ້ຊ່ວຍລູກຊາຍ ແລະ ລູກສາວຂອງທ່ານຕັ້ງ ແລະ ເຮັດເປົ້າໝາຍໃຫ້ສຳເລັດ ອັນທີ່ຈະຫ້າທາຍເຂົາຢ່າງເໝາະສົມໃນຂະນະທີ່ເຂົາພະຍາຍາມເພື່ອໃຫ້ໄດ້ຮັບ ລາງວັນໜ້າທີ່ຕໍ່ພະເຈົ້າ ຫລື ການຮັບຮອງຄວາມເປັນຍິງໜຸ່ມ. ດ້ວຍຄວາມ

ເຫັນຂອບຈາກທ່ານ, ເຂົາຈະສາມາດຕັ້ງຂໍ້ກຳນົດຫລາຍຂໍ້ ເພື່ອໃຫ້ເໝາະສົມ ກັບຄວາມຕ້ອງການ ແລະ ຄວາມສົນໃຈສ່ວນຕົວ.

- ໃຫ້ເວົ້າລົມກັບລູກຊາຍ ແລະ ລູກສາວຂອງທ່ານກ່ຽວກັບຄວາມກ້າວໜ້າຂອງເຂົາ. ທຸກເທື່ອທີ່ເຂົາບັນລຸເປົ້າໝາຍ ຫລື ເຮັດໂຄງການສຳເລັດ, ໃຫ້ຊຸກເຊີຍເຂົາໃນ ຄວາມພະຍາຍາມຂອງເຂົາ ແລະ ເຊັນຊື່ທ່ານໃສ່ໃນບ່ອນທີ່ຖືກຕ້ອງໃນປື້ມ *Aaronic Priesthood: Fulfilling Our Duty to God Guidebook* ຫລື ໃນປື້ມ *Young Women Personal Progress.*

- ໃຫ້ເວົ້າລົມກັບຜູ້ນຳຖານະປະໂລຫິດແຫ່ງອາໂລນ ຫລື ຜູ້ນຳອົງການຍິງໜຸ່ມ ຂອງລູກທ່ານ. ຮູ້ນຮູ້ວ່າ ຜູ້ນຳເຫລົ່ານີ້ໄດ້ເຮັດຫຍັງແດ່ໃນກິດຈະກຳຂອງຊາວໜຸ່ມ ແລະ ໃນກຸ່ມຖານະປະໂລຫິດຕ່າງໆ ແລະ ໃນຫ້ອງຮຽນ ເພື່ອຊ່ວຍເພີ່ມຄວາມ ເຂັ້ມແຂງໃຫ້ແກ່ລູກຊາຍ ແລະ ລູກສາວຂອງທ່ານ. ຊຸກຍູ້ລູກຂອງທ່ານໃຫ້ໄປ ຮ່ວມກິດຈະກຳສຳລັບຊາວໜຸ່ມແຕ່ລະອາທິດ.

- ເມື່ອເປັນໄປໄດ້, ໃຫ້ໄປຮ່ວມເຫດການສຳຄັນຂອງຊາວໜຸ່ມໃນສາດສະໜາຈັກ ເມື່ອມີການຮັບຮູ້ ແລະ ຍ້ອງຍໍລູກຊາຍ ແລະ ລູກສາວຂອງທ່ານ.

- ໃຫ້ຊຸກຍູ້ລູກຊາຍ ແລະ ລູກສາວຂອງທ່ານໃຫ້ໄປຮ່ວມຫ້ອງຮຽນສາດສະໜາ.

ບົດບາດຂອງຜູ້ນຳ

ໃນຖານະທີ່ເປັນຜູ້ນຳຂອງຊາຍໜຸ່ມ ແລະ ຍິງໜຸ່ມ, ທ່ານມີບົດບາດອັນສຳຄັນໃນການຊ່ວຍໃຫ້ເຂົາເຈົ້າຮູ້ຈັກ ພະກິດຕິຄຸນຂອງພະເຢຊູຄິດ, ພັດທະນາປະຈັກພະຍານ, ແລະ ບັນລຸຈຸດເປົ້າໝາຍທີ່ຈະໄດ້ຮັບລາງວັນໝ້ຳທີ່ຕໍ່ພະເຈົ້າ ແລະ ຈະໄດ້ຮັບການຮັບຮູ້ຄວາມເປັນຍິງໜຸ່ມ. ຕົວຢ່າງຂອງທ່ານ, ກຳລັງໃຈ, ແລະ ຄວາມເອົາໃສ່ໃຈຂອງທ່ານສາມາດເປັນສິ່ງລ້ຳຄ່າສຳລັບຊາວໜຸ່ມໃນເວລາອັນສຳຄັນໃນຊີວິດຂອງເຂົາ. ໃຫ້ຮູ້ຈັກກ່ຽວກັບຊາຍໜຸ່ມ ແລະ ຍິງໜຸ່ມແຕ່ລະຄົນ ແລະ ຫັງວິທີທີ່ດີທີ່ສຸດທີ່ທ່ານສາມາດຊ່ວຍເຂົາໄດ້.

ຂໍ້ມູນກ່ຽວກັບລາຍການຂອງຊາວໜຸ່ມໃນສາດສະໜາຈັກມີຢູ່ໃນປຶ້ມ *Church Handbook of Instructions, Book 2: Priesthood and Auxiliary Leaders.* ຄູ່ມືເຫລັ້ມນີ້ເສີມຂໍ້ມູນດັ່ງກ່າວໂດຍ:

- ກ່າວເຖິງ ໂຄງร່າງຂອງລາຍການຂອງສາດສະໜາຈັກທີ່ຊ່ວຍໃຫ້ຊາວໜຸ່ມ ປະສົບຄວາມສຳເລັດ—ລາຍການໃນປຶ້ມ *Aaronic Priesthood Duty to God* ແລະ ລາຍການໃນປຶ້ມ *Young Women Personal Progress.*
- ໃຫ້ຂໍ້ມູນຢ່າງລະອຽດກ່ຽວກັບກິດຈະກຳສຳລັບຊາວໜຸ່ມ.
- ໃຫ້ຂໍ້ມູນກ່ຽວກັບວິທີພັດທະນາການເປັນຜູ້ນຳໃນກຸ່ມຊາວໜຸ່ມ.

ພວກເຮົາຂຸກຍູ້ທ່ານໃຫ້:

- ອ່ານຂໍ້ມູນຢູ່ໃນຄູ່ມືເຫລັ້ມນີ້ຢ່າງລະອຽດ.

- ທຳງານຮ່ວມກັບພໍ່ແມ່ເພື່ອໃຫ້ພອນ ແລະ ເພີ່ມຄວາມເຂັ້ມແຂງໃຫ້ແກ່ຊາຍໜຸ່ມ ແລະ ຍິງໜຸ່ມ. ເມື່ອທ່ານພົບກັບຊາວໜຸ່ມເພື່ອທຳອິດ ຜູ້ຫາກໍເຂົ້າມາຮ່ວມ ລາຍການຂອງຊາຍໜຸ່ມ ແລະ ຍິງໜຸ່ມ, ໃຫ້ມອບຄູ່ມືເຫລັ່ມນີ້ໃຫ້ພໍ່ແມ່ຂອງ ເຂົາ ແລະ ຊຸກຍູ້ເຂົາເຈົ້າໃຫ້ອ່ານມັນ. ແຈ້ງໃຫ້ພໍ່ແມ່ຮູ້ກ່ຽວກັບກິດຈະກຳຂອງ ຊາວໜຸ່ມ, ແລະ ເຊື້ອເຊີນເຂົາເຈົ້າໃຫ້ໄປຮ່ວມເມື່ອເໝາະສົມ.

- ອ່ານປຶ້ມ *ສຳລັບຄວາມເຂັ້ມແຂງຂອງຊາວໜຸ່ມ* ແລະ ນຳໃຊ້ມາດຕະຖານຢູ່ໃນ ຊີວິດຂອງທ່ານເອງ. ເຮັດທຸກຢ່າງ ເທົ່າທີ່ທ່ານສາມາດເຮັດໄດ້ເພື່ອ ສອນມາດຕະຖານເຫລົ່ານີ້ໃຫ້ແກ່ ຊາວໜຸ່ມ.

- ຖ້າທ່ານເປັນຜູ້ນຳຂອງກຸ່ມຊາຍໜຸ່ມ, ທ່ານຕ້ອງຮູ້ຈັກຄູ່ມື *Aaronic Priesthood: Fulfilling Our Duty to God* ສຳລັບນັກຄະນະຍົກ, ຄູສອນ, ແລະ ປະໂລຫິດ ເປັນຢ່າງດີ. ຖ້າທ່ານເປັນຜູ້ນຳຂອງກຸ່ມຍິງໜຸ່ມ, ທ່ານຕ້ອງຮູ້ຈັກປຶ້ມ *Young Women Personal Progress* ເປັນຢ່າງດີ.

ສຳລັບຄວາມເຂັ້ມແຂງຂອງຊາວໜຸ່ມ

ປຶ້ມ *ສຳລັບຄວາມເຂັ້ມແຂງຂອງຊາວໜຸ່ມ* ເປັນຄູ່ມືທີ່ຝ່າຍປະທານສູງສຸດຂອງສາດສະໜາຈັກໄດ້ຈັດຂຶ້ນ ເພື່ອມອບໃຫ້ແກ່ຊາຍໜຸ່ມ ແລະ ຍິງໜຸ່ມ. ມັນເປັນຕົວແທນໃຫ້ມາດຕະຖານຂອງສາດສະໜາຈັກ ແລະ ສອນຊາວໜຸ່ມໃຫ້ຮູ້ວິທີທີ່ຈະນຳໃຊ້ມັນ. ມັນບັນຈຸຄຳຊີ້ນຳທີ່ແນ່ນອນເພື່ອເພີ່ມຄວາມເຂັ້ມແຂງໃຫ້ແກ່ຊາວໜຸ່ມ ແລະ ນຳພາເຂົາໄປຕະຫລອດຊີວິດ. ໂດຍການຮັກສາມາດຕະຖານເຫລົ່ານີ້, ຊາວໜຸ່ມຈະເປັນປະໂຫຍດຕໍ່ສາດສະໜາ ແລະ ຕໍ່ໂລກ ແລະ ຈະມີຄ່າຄວນພໍທີ່ຈະໄປພະວິຫານເພື່ອຮັບເອົາພິທີການທີ່ສັກສິດ.

ຊາຍໜຸ່ມ ແລະ ຍິງໜຸ່ມທຸກຄົນຄວນມີປຶ້ມ *ສຳລັບຄວາມເຂັ້ມແຂງຂອງຊາວໜຸ່ມ.* ເຂົາຄວນໄດ້ຮັບການຊຸກຍູ້ໃຫ້ຫົບທວນມາດຕະຖານເລື້ອຍໆ ແລະ ສຳຫລວດຕົວເອງວ່າເຂົາໄດ້ດຳລົງຊີວິດຕາມນັ້ນໄດ້ດີປານໃດ.

ໃນຖານະທີ່ເປັນພໍ່ແມ່, ທ່ານຄວນມີປຶ້ມຫົວນັ້ນຄືກັນ. ໃຫ້ສຶກສາມັນ. ໃຫ້ສົນທະນາກ່ຽວກັບມາດຕະຖານ ແລະ ຫລັກທຳກັບລູກຊາຍ ແລະ ລູກສາວຂອງທ່ານ. ໃຫ້ສົນທະນາກ່ຽວກັບມາດຕະຖານຢູ່ໃນການສ້ຽງສັນໃນຄອບຄົວ. ທ່ານເອງກໍຄວນດຳລົງຊີວິດຕາມນັ້ນດ້ວຍ. ຕົວຢ່າງຂອງທ່ານຈະຊ່ວຍລູກຂອງທ່ານໄດ້ດີທີ່ສຸດໃນການດຳລົງຊີວິດຕາມຄືກັນ.

ຖ້າທ່ານເປັນຜູ້ນຳ, ທ່ານຄວນສຶກສາມາດຕະຖານຢູ່ໃນຄູ່ມືເຫລົ່ານີ້. ໃຫ້ຊອກຫາວິທີທາງທີ່ຈະນຳໃຊ້ມັນຢູ່ໃນບ້ານຮຽນ ແລະ ໃນກຸ່ມຖານະປະໂລຫິດ ແລະ

ໃນກິດຈະກຳຢູ່ໃນຫ້ອງ. ປຶ້ມ *ສຳລັບຄວາມເຂັ້ມແຂງຂອງຊາວໜຸ່ມ* ເປັນແຫລ່ງທີ່ສຳຄັນສຳລັບການວາງແຜນເຮັດກິດຈະກຳສຳລັບຊາວໜຸ່ມ.

ລາຍການໜ້າທີ່ຂອງຖານະ ປະໂລຫິດແຫ່ງອາໂລນຕໍ່ພະເຈົ້າ

ພາບສຳລວມ



ລາຍການໜ້າທີ່ຕໍ່ພະເຈົ້າຂອງຖານະ ປະໂລຫິດແຫ່ງອາໂລນຊ່ວຍກຸ່ມຊາຍ ໜຸ່ມໃຫ້ບັນລຸຈຸດປະສົງຂອງຖານະ ປະໂລຫິດແຫ່ງອາໂລນ. ມັນຊ່ວຍເຂົາ ພັດທະນາຄວາມຊຳນານ ແລະ ຄຸນສົມບັດ ທີ່ຈຳເປັນຕໍ່ຄວາມສຳເລັດໃນຊີວິດ.

ຈຸດເປົ້າໝາຍ ແລະ ຂໍ້ກຳນົດຂອງລາຍການ ມີຢູ່ໃນຄູ່ມື *Aaronic Priesthood: Fulfilling Our Duty to God* ສຳລັບມັກຄະນາຍົກ, ຄູສອນ, ແລະ ປະໂລຫິດ. ຊາຍໜຸ່ມກັບ ພໍ່ແມ່ ແລະ ຜູ້ນຳຂອງເຂົາຈະຊ່ວຍກັນຕັ້ງ ແລະ ເຮັດເປົ້າໝາຍໃຫ້ສຳເລັດເພື່ອໃຫ້ໄດ້ ຮັບລາງວັນໜ້າທີ່ຕໍ່ພະເຈົ້າ.

ເປົ້າໝາຍບາງຢ່າງຈະເຮັດນຳຄອບຄົວ, ບາງຢ່າງຈະເຮັດນຳກຸ່ມຖານະປະໂລຫິດ, ແລະ ບາງຢ່າງຈະເຮັດຄົນດຽວ. ຍົກຕົວຢ່າງ, ມັກຄະນາຍົກຈະເຮັດເປົ້າໝາຍ ດັ່ງຕໍ່ໄປນີ້ໃຫ້ສຳເລັດພາຍໃນສອງປີ:

ຄອບຄົວ: ເປົ້າໝາຍ 7 ຢ່າງນຳຄອບຄົວ

ກຸ່ມຖານະປະໂລຫິດ: ເປົ້າໝາຍ 7 ຢ່າງໃນກຸ່ມຖານະປະໂລຫິດ ຫລື ໃນກິດຈະກຳສຳລັບຊາວໜຸ່ມ

ສ່ວນຕົວ: ເປົ້າໝາຍ 32 ຢ່າງທີ່ຕ້ອງເຮັດສຳເລັດດ້ວຍຕົວເອງ

ໂຄງການຮັບໃຊ້: ເລືອກເຮັດເອງ

ຊາຍໜຸ່ມຈະຕັ້ງເປົ້າໝາຍສ່ວນຕົວໃນການເຮັດຕາມການພັດທະນາສີ່ຢ່າງດັ່ງນີ້: ການພັດທະນາທາງວິນຍານ; ການພັດທະນາທາງຮ່າງກາຍ; ການພັດທະນາ ເລື່ອງການສຶກສາ, ສ່ວນບຸກຄົນ, ແລະ ວິຊາອາຊີບ; ແລະ ການພັດທະນາການເປັນ ພົນລະເມືອງ ແລະ ດ້ານສັງຄົມ.

ຕາຕະລາງດັ່ງຕໍ່ໄປນີ້ສະຫລຸບລາຍການຄວາມສຳເລັດເປັນຂອງຖານະປະໂລຫິດແຫ່ງອາໂລນ. ຕາຕະລາງໃບນີ້ກໍມີຢູ່ໃນຄູ່ມືຂອງຊາຍໜຸ່ມຄືກັນ ເພື່ອຊ່ວຍເຂົາບັນທຶກຄວາມກ້າວໜ້າຂອງເຂົາ.

YOUR DUTY TO GOD RECORD SHEET

Check or initial the appropriate box as you complete each section. Your bishop will sign your Completion of Duty to God page when you have completed the requirements in the following areas. Then you can receive your Duty to God certificate.

Priesthood Duties and Standards	
Family Activities	
Quorum Activities	
Personal Goals	
Spiritual Development	
Physical Development	
Educational, Personal, and Career Development	
Citizenship and Social Development	
Duty to God Service Project	
My Personal Journal	

ໂຄງການຮັບใช้ໜ້າທີ່ຕໍ່ພະເจ້າ

ຊາຍໜຸ່ມແຕ່ລະຄົນຕ້ອງເຮັດໂຄງການ ຮັບใช้ສານຢ່າງใຫ້ສຳເລັດ ອັນທີ່ຈະ ເປັນປະໂຫຍດໃຫ້ແກ່ຄອບຄົວ, ຫວອດ, ສະເຕກ, ຫລື ຊຸມຊົນ. ຕ້ອງເຮັດໂຄງການ ແຕ່ລະຢ່າງใຫ້ແລ້ວຕອນເປັນນັກຄະ ນາຍົກ, ຕອນເປັນຄູສອນ, ແລະ ຕອນ ເປັນປະໂລຫິດ. ຊາຍໜຸ່ມຄວນວາງ ແຜນ, ຕຽມ, ແລະ ເຮັດໂຄງການນັ້ນ. ຄົນອື່ນໆກໍສາມາດຊ່ວຍໄດ້ເມື່ອຈຳເປັນ. ໂຄງການນັ້ນຕ້ອງໄດ້ຮັບການເຫັນຊອບ ຈາກພໍ່ແມ່ຂອງຊາຍໜຸ່ມ ແລະ ຄູສອນ ຂອງກຸ່ມຖານະປະໂລຫິດເສຍກ່ອນ.

ກິດຈະກຳໜ້າທີ່ຕໍ່ພະເจ້າສຳລັບຊາວໜຸ່ມ

ຝ່າຍປະທານຂອງກຸ່ມຊາຍໜຸ່ມ ແລະ ຝ່າຍປະທານຂອງກຸ່ມຖານະປະໂລຫິດ ໄດ້ຖືກຊຸກຍູ້ໃຫ້ວາງແຜນເຮັດກິດຈະກຳສຳລັບຊາວໜຸ່ມທີ່ເຈາະຈົງໃສ່ການ ພັດທະນາສີ່ຢ່າງ: ການພັດທະນາທາງວິນຍານ; ການພັດທະນາທາງຮ່າງກາຍ; ການພັດທະນາເລື່ອງການສຶກສາ, ສ່ວນບຸກຄົນ, ແລະ ວິຊາອາຊີບ; ແລະ ການ ພັດທະນາການເປັນພົນລະເມືອງ ແລະ ດ້ານສັງຄົມ. ສິ່ງນີ້ຈະຊ່ວຍຊາຍໜຸ່ມໃຫ້ ບັນລຸເປົ້າໝາຍເພື່ອຈະໄດ້ຮັບລາງວັນໜ້າທີ່ຕໍ່ພະເจ້າຂອງເຂົາ.

ລູກເສືອ

ໃນບາງປະເທດ, ໂຄງການລູກເສືອໄດ້ຖືກກຳນົດໂດຍຝ່າຍປະທານເຂດ ແລະ ສູນກາງໃຫຍ່ຂອງສາດສະໜາຈັກ ໃຫ້ເຮັດເປັນສ່ວນໜຶ່ງໃນລາຍການກິດຈະກຳ ຂອງຖານະປະໂລຫິດແຫ່ງອາໂລນ. ໃນກໍລະນີນີ້ ຊາຍໜຸ່ມຈະຖືກຊຸກຍູ້ໃຫ້ມີສ່ວນ ຮ່ວມທັງໃນລາຍການໜ້າທີ່ຕໍ່ພະເจ້າຂອງຖານະປະໂລຫິດແຫ່ງອາໂລນ ແລະ ໂຄງການລູກເສືອ.

ຂໍ້ກຳນົດຂອງລູກເສືອອາດຖືກໃຊ້ເພື່ອບັນລຸຈຸດເປົ້າໝາຍທີ່ຄ້າຍຄືກັນໃນລາຍການ ກິດຈະກຳຂອງຖານະປະໂລຫິດແຫ່ງອາໂລນ. ລາງວັນໜ້າທີ່ຕໍ່ພະເຈົ້າ ແມ່ນ ລາງວັນຂອງຖານະປະໂລຫິດ, ເຊິ່ງມີຂໍ້ກຳນົດທີ່ຈະຊ່ວຍຊາຍໜຸ່ມໃຫ້ພັດທະນາ ທາງວິນຍານ ແລະ ບັນລຸໜ້າທີ່ຖານະປະໂລຫິດຂອງເຂົາ.

ໃນເຂດທີ່ສາດສະໜາຈັກບໍ່ໄດ້ກ່ຽວພັນເລື່ອງ ໂຄງການລູກເສືອ, ຜູ້ນຳໃນທ້ອງຖິ່ນ ສາມາດຈັດ ໂຄງການລູກເສືອຂຶ້ນພາຍໃຕ້ຂໍ້ແນະນຳດັ່ງຕໍ່ໄປນີ້:

- ການໃຊ້ກິດຈະກຳຂອງລູກເສືອຕ້ອງໄດ້ຮັບການເຫັນຊອບ ຈາກຝ່າຍປະທານເຂດ ແລະ ກຳມະການລູກເສືອສາມັນຂອງສາດສະໜາຈັກ.
- ໂຄງການລູກເສືອຈະຕ້ອງສອດຄ່ອງກັບນະໂຍບາຍ, ມາດຕະຖານ, ແລະ ອຸດົມຄະຕິຂອງສາດສະໜາຈັກ.
- ກິດຈະກຳລູກເສືອຕ້ອງເຂົ້າຮ່ວມກັບຂະບວນການລູກເສືອທົ່ວໂລກ ແລະ ຕ້ອງອີງຕາມກົດເກນຂອງ *Baden Powell Partnership.*

ໃບຍ້ອງຍໍ ແລະ ລາງວັນ

ຊາຍໜຸ່ມແຕ່ລະຄົນຕ້ອງໄດ້ຮັບ ໃບຍ້ອງຍໍໜ້າທີ່ຕໍ່ພະເຈົ້າສາມໃບ: ໃບໜຶ່ງຕອນເປັນ ອັກຄະນາຍົກ, ອີກໃບໜຶ່ງຕອນເປັນຄູສອນ, ແລະ ອີກໃບໜຶ່ງຕອນເປັນປະໂລຫິດ (ໃບຍ້ອງຍໍນັກຄະນາຍົກ, 36416; ຄູສອນ, 36417; ປະໂລຫິດ, 36418). ເຂົາຈະໄດ້ຮັບ ໃບຍ້ອງຍໍທຸກຄັ້ງທີ່ເຂົາໄດ້ເຮັດສຳເລັດຂໍ້ກຳນົດຂໍ້ໜຶ່ງ ທີ່ລະບຸໄວ້ຢູ່ຄູ່ມື *Aaronic Priesthood: Fulfilling Our Duty to God.* ຄົນໜຶ່ງ ໃນ ຝ່າຍອະທິການ ຈະ ມອບ ໃບ ຍ້ອງ ຍໍ ໃຫ້ ຢູ່ ໃນ ຫ້ອ ງ ຖານ ະ ປະ ໂລ ຫິ ດ ຫລື ໃ ນ ຕ ອ ນ ເ ປີ ດ ປ ະ ຊຸ ມ ຖ ານ ະ ປະ ໂ ລ ຫິ ດ.

ເມື່ອ ຊ າ ຍ ໜຸ ່ ມ ໄ ດ້ ຮ ັ ບ ໃ ບ ຍ້ ອ ງ ຍ ໍ ໜ້ າ ທ ີ່ ຕ ໍ່ ພ ະ ເ ຈ ົ້ າ ທ ັ ງ ສ າ ມ ໃ ບ ແ ລ ້ ວ , ເ ຂ ົ າ ຈ ະ ໄ ດ້ ຮ ັ ບ ລ າ ງ ວ ັ ນ ໜ້ າ ທ ີ່ ຕ ໍ່ ພ ະ ເ ຈ ົ້ າ . ເ ຂ ົ າ ຈ ະ ໄ ດ້ ຮ ັ ບ ລ າ ງ ວ ັ ນ ນ ີ້ ເ ມ ື່ ອ ເ ຂ ົ າ ໃ ກ້ ເ ຖ ິ ງ 19 ປ ີ . ລ າ ງ ວ ັ ນ ນ ີ້ ແ ມ່ ນ ຮ ່ ວ ມ ດ ້ ວ ຍ ໃ ບ ຍ້ ອ ງ ຍ ໍ (36419) ແ ລ ະ ຫ ລ ຽ ນ ຕ າ ຄ ຳ ຊ ອ ບ (81334). ຄົ ນ ໜ ຶ່ ງ ໃ ນ ຝ່ າ ຍ ອ ະ ທ ິ ຖ ານ ຈ ະ ເ ປ ັ ນ ຜ ູ້ ມ ອ ບ ລ າ ງ ວ ັ ນ ນ ີ້ ໃ ຫ້ ຢ ູ່ ໃ ນ ກ ອ ງ ປ ະ ຊ ຸ ມ ສ ິ ນ ລ ະ ລ ຶ ກ.

ໃບຍ້ອງຍໍ ແລະ ຫລືອນຕາຄຳຂອບນິຈຈຳໜ່າຍຢູ່ທີ່ສູນຈຳໜ່າຍຂອງສາດສະໜາຈັກ ໂດຍໃຊ້ເງິນຂອງຫວອດ ຫລື ສາຂາ, ເຊິ່ງຊາຍໜຸ່ມ ຫລື ພໍ່ແມ່ຂອງເຂົາບໍ່ຈຳເປັນ ຕ້ອງຈ່າຍ.

ການຮັກສາບັນທຶກ

ຊາຍໜຸ່ມຖືກຊຸກຍູ້ໃຫ້ຮັກສາປື້ມຄູ່ມືຂອງເຂົາໄວ້ໃຫ້ດີເພື່ອບັນທຶກຄວາມກ້າວໜ້າຂອງ ເຂົາ. ຄູສອນຂອງກຸ່ມຖານະປະໂລຫິດອາດຈະຕ້ອງໄດ້ບັນທຶກຄວາມກ້າວໜ້າຂອງ ຊາຍໜຸ່ມແຕ່ລະຄົນໄວ້ຄືກັນ ເພື່ອຈະໄດ້ໃຫ້ການຊຸກຍູ້ທີ່ເໝາະສົມ (ເບິ່ງ *Aaronic Priesthood Duty to God Achievement Record* [36720]). ບໍ່ຈຳເປັນຕ້ອງ ບັນທຶກຫຍັງຢ່າງຫລວງຫລາຍກໍໄດ້.

ການປັບປຸງໃຫ້ເຂົ້າກັບບຸກຄົນ ແລະ ຄວາມຕ້ອງການໃນ ທ້ອງຖິ່ນ

ຂໍ້ກຳນົດທີ່ບົ່ງໄວ້ຢູ່ໃນຄູ່ມື *Aaronic Priesthood: Fulfilling Our Duty to God* ສາມາດດັດແປງໃຫ້ເຂົ້າກັບສະພາບການສ່ວນຕົວ ຫລື ທ້ອງຖິ່ນໄດ້, ຕະຫລອດ ທັງຄວາມສົນໃຈ, ຄວາມຕ້ອງການ ໂດຍໄດ້ຮັບຄວາມເຫັນຊອບກ່ອນຈາກພໍ່ແມ່ ແລະ ຜູ້ນຳຖານະປະໂລຫິດແຫ່ງອາໂລນ. ເມື່ອມີການປ່ຽນແປງ ຫລື ຍົກເວັ້ນສຳລັບ ບຸກຄົນໃດບຸກຄົນໜຶ່ງ, ຜູ້ນຳຄວນພິຈາລະນາຢ່າງຖ້ວນຖີ່ເຖິງຜົນຂອງການປ່ຽນ ແປງທີ່ອາດກະທົບກະເທືອນຕໍ່ຊາຍໜຸ່ມຄົນອື່ນໆ. ຫລັງຈາກພໍ່ແມ່ ແລະ ຜູ້ນຳໄດ້ ພິຈາລະນາຢ່າງຖ້ວນຖີ່ແລ້ວ ເຂົາເຈົ້າສາມາດດັດແປງມັນໄດ້ ເພື່ອໃຫ້ເໝາະສົມ ກັບຄວາມຕ້ອງການຂອງຊາຍໜຸ່ມຜູ້ພິການ ຫລື ຜູ້ປົ່ນຍາອ່ອນ, ເພື່ອໃຫ້ເໝາະສົມ ກັບວັດທະນະທຳ, ຫລື ຄວາມຕ້ອງການຂອງບຸກຄົນ, ຫລື ເພື່ອໃຫ້ຊາຍໜຸ່ມຜູ້ບໍ່ໄດ້ ເປັນສະມາຊິກມີສ່ວນຮ່ວມນຳ.

ຄູສອນ ຫລື ປະໂລຫິດທີ່ມີຄ່າຄວນ ຜູ້ບໍ່ໄດ້ຮັບໃບຍ້ອງຍໍໜ້າທີ່ຕໍ່ພະເຈົ້າ ໃບໜຶ່ງ ຫລື ທັງສອງໃບ ກໍສາມາດໄດ້ຮັບລາງວັນໜ້າທີ່ຕໍ່ພະເຈົ້າໄດ້ຢູ່ ໂດຍການເຮັດຕາມ (1) ຂໍ້ກຳນົດທັງໝົດສຳລັບໃບຍ້ອງຍໍ ທີ່ໃຊ້ໃນປະຈຸບັນ ແລະ (2) ກິດຈະກຳໃນ ຄອບຄົວ ແລະ ໃນກຸ່ມຖານະປະໂລຫິດ ແລະ ເປົ້າໝາຍສ່ວນຕົວ ສຳລັບໃບ

ຍ້ອງຍໍດ້ວງກ່າວ (ຍົກເວັ້ນແຕ່ໂຄງການຮັບໃຊ້ປະຈຳປີ, ການກ່າວຄຳປາໄສ, ແລະ ການສອນບົດຮຽນໃນການສັງສັນໃນຄອບຄົວ).

ໜ້າທີ່ຮັບຜິດຊອບຂອງຜູ້ນຳ

ຄົນໜຶ່ງໃນຝ່າຍອະທິການເປັນຜູ້ຮັບຜິດຊອບທີ່ຈະສອນຊາຍໜຸ່ມກ່ຽວກັບໜ້າທີ່ຖານະປະໂລຫິດຂອງເຂົາ ແລະ ຊ່ວຍເຂົາໃຫ້ໄດ້ຮັບລາງວັນໜ້າທີ່ຕໍ່ພະເຈົ້າ. ຄົນໜຶ່ງໃນຝ່າຍຂອງອະທິການຈະໃຫ້ຝ່າຍປະທານກຸ່ມຊາຍໜຸ່ມຊ່ວຍເຫລືອເພີ່ນ. ຝ່າຍປະທານຂອງກຸ່ມຊາຍໜຸ່ມຄວນໃຫ້ແນ່ໃຈว່າ ກຸ່ມຊາຍໜຸ່ມໄດ້ຮັບ ໂອກາດ ໃນລະຫວ່າງການປະຊຸມຢູ່ໃນຫ້ອງຮຽນຂອງກຸ່ມຖານະປະໂລຫິດ ແລະ ໃນ ກິດຈະກຳ ເພື່ອບັນລຸເປົ້າໝາຍທີ່ໄດ້ກຳນົດໄວ້.

ເມື່ອໃກ້ຄົບຮອບວັນເກີດ 12 ປີ ຂອງຊາຍໜຸ່ມ, ຄົນໜຶ່ງໃນຝ່າຍອະທິການ ແລະ ຄົນໜຶ່ງໃນຝ່າຍປະທານກຸ່ມນັກຄະນາຍົກຈະພົບກັບຊາຍໜຸ່ມຄົນນັ້ນ ແລະ ພໍ່ແມ່ຂອງເຂົາ. ເຂົາເຈົ້າຄວນມອບປື້ມ *Aaronic Priesthood: Fulfilling Our Duty to God* ສຳລັບນັກຄະນາຍົກໃຫ້ເຂົາ ແລະ ສອນໜ້າທີ່ໃຫ້ເຂົາ. ຄວນມີ ການຢັ້ງຢືນປາມທີ່ເໝາະສົມກັນນີ້ອີກເມື່ອຊາຍໜຸ່ມໄດ້ຮັບການແຕ່ງຕັ້ງຕໍ່ຕຳແໜ່ງ ຄູສອນ ແລະ ປະໂລຫິດ.

ຄົນໜຶ່ງໃນຝ່າຍອະທິການໄດ້ຖືກຈຸກຍູ້ໃຫ້ໃຊ້ຊ່ວງເວລາສຳພາດຕາມປົກກະຕິກັບ ຊາຍໜຸ່ມ ເພື່ອຈະທົບທວນເຖິງຄວາມກ້າວໜ້າຂອງເຂົາ. ປະທານສະເຕກຄວນ ສອບຖາມອະທິການເລື້ອຍໆກ່ຽວກັບຄວາມຜາສຸກ ແລະ ຄວາມກ້າວໜ້າຂອງ ກຸ່ມຊາຍໜຸ່ມຢູ່ໃນຫວອດຂອງເຂົາເຈົ້າ.

ລາຍການເພື່ອຄວາມກ້າວໜ້າສ່ວນຕົວຂອງຍິງໜຸ່ມ

ພາບສຳລວມ

ລາຍການເພື່ອຄວາມກ້າວໜ້າສ່ວນຕົວຂອງ ຍິງໜຸ່ມຊ່ວຍຍິງໜຸ່ມແຕ່ລະຄົນໃຫ້ເຂົ້າໃຈເຖິງ ພະປະສົງຂອງພະເຈົ້າສຳລັບນາງ, ຊຸກຍູ້ ນາງໃຫ້ຮັກສາພະບັນຍັດ, ແລະ ຕຽມຕົວທີ່ ຈະຮັບ ແລະ ຮັກສາພັນທະສັນຍາທີ່ສັກສິດ ຂອງພະວິຫານ. ມັນຈັດຕຽມແນວທາງທີ່ ຈະໃຫ້ນາງອຸທິດຕົນໃນບ້ານໃນຕອນນີ້ ແລະ ຕຽມສຳລັບຄວາມຮັບຜິດຊອບ ໃນອະນາຄົດ ໃນຖານະເປັນສະຕີ, ເປັນພັນລະຍາ, ເປັນແມ່, ແລະ ເປັນຜູ້ນຳ ໃນສາດສະໜາຈັກຢ່າງຊື່ສັດ. ມັນຕຽມນາງທີ່ຈະຮັບເອົາການຮັບຮູ້ຄວາມ ເປັນຍິງໜຸ່ມ.

ເປົ້າໝາຍ ແລະ ຂໍ້ກຳນົດຕ່າງໆຂອງລາຍການມີບັນຈຸຢູ່ໃນປື້ມ *Young Women Personal Progress*. ຍິງໜຸ່ມຈະຮ່ວມມືກັບພໍ່ແມ່ ແລະ ຜູ້ນຳຂອງເຂົາເພື່ອຕັ້ງ ແລະ ບັນລຸເປົ້າໝາຍຕາມຄຸນຄ່າເຈັດຢ່າງຂອງອົງການຍິງໜຸ່ມ. ຍິງໜຸ່ມຈະຕ້ອງ ເຮັດຫົກຢ່າງໃນແຕ່ລະຄຸນຄ່າເຈັດຢ່າງນັ້ນໃຫ້ສຳເລັດ. ປະສົບການດັ່ງກ່າວຈະ ຊ່ວຍນາງໃຫ້ເຂົ້າໃຈຄຸນຄ່າແຕ່ລະຢ່າງ ແລະ ຫລັກການທຳພະກິດຕິຄຸນທີ່ກ່ຽວພັນ ກັນນັ້ນ. ແລ້ວນາງຈະຕ້ອງເຮັດໂຄງການທີ່ມີຄ່າໃດໜຶ່ງທີ່ໃຊ້ເວລາ 10 ຊົ່ວໂມງ ເພື່ອນຳໃຊ້ສິ່ງທີ່ນາງໄດ້ຮຽນຮູ້ມາ. ນາງຈະຕ້ອງ ພະຍາຍາມດຳລົງຊີວິດຕາມ ມາດຕະຖານທີ່ບົ່ງໄວ້ຢູ່ໃນປື້ມ *ສຳລັບຄວາມເຂັ້ມແຂງຂອງຊາວໜຸ່ມ.*

ຕາຕະລາງຄ່ຽງຕໍ່ໄປນີ້ສະຫລຸບລາຍການເພື່ອຄວາມກ້າວໜ້າສ່ວນຕົວຂອງຍິງໜຸ່ມ. ຕາຕະລາງໃບນີ້ກໍມີຢູ່ໃນປຶ້ມ *Young Women Personal Progress* ຄືກັນ ເພື່ອຊ່ວຍຍິງໜຸ່ມບັນທຶກຄວາມກ້າວໜ້າຂອງເຂົາ.

PERSONAL PROGRESS RECORD SHEET

	Faith	Divine Nature	Individual Worth	Knowledge	Choice and Accountability	Good Works	Integrity
Value Experience							
Value Experience							
Value Experience							
Value Experience							
Value Experience							
Value Experience							
Value Project							

Young Womanhood Recognition _____

Date

In the boxes above, write the number of the experience you completed.

ປະສົບການ ແລະ ໂຄງການທີ່ມີຄຸນຄ່າ

ຍິງໜຸ່ມສາມາດໃຊ້ເວລາຄົນເທົ່າໃດກໍໄດ້ໃນລາຍການຄວາມກ້າວໜ້າສ່ວນຕົວຂອງເຂົາ, ແຕ່ຄວນເຮັດໃຫ້ແລ້ວເທື່ອລະເລັກເທື່ອລະນ້ອຍໄປ ເພື່ອວ່າຈະມີລາຍການເຮັດໄປຕະຫລອດໃນຊ່ວງເວລາທີ່ຢູ່ໃນໂຄງການຍິງໜຸ່ມ. ຍິງໜຸ່ມຄວນເຮັດເກົ້າຢ່າງທີ່ເປັນປະສົບການ ຫລື ໂຄງການໃຫ້ແລ້ວແຕ່ລະປີ.

ຕໍ່ໄປນີ້ແມ່ນຂໍ້ແນະນຳສຳລັບປະສົບການ ແລະ ໂຄງການທີ່ມີຄຸນຄ່າ:

- ຍິງໜຸ່ມສາມາດເລືອກເອົາຄຸນຄ່າໃດມາເຮັດກ່ອນກໍໄດ້. ເຂົາຄວນເຮັດຫົກຢ່າງທີ່ເປັນປະສົບການຢູ່ໃນຄຸນຄ່າ ໃດໜຶ່ງໃຫ້ແລ້ວກ່ອນທີ່ຈະເຮັດໂຄງການສຳລັບຄຸນຄ່ານັ້ນ.
- ຂໍ້ແນະນຳຄື ບໍ່ໃຫ້ຮ່ວມໂຄງການທັງໝົດທີ່ມີຄ່າຄວນໃສ່ນຳກັນ. ເຖິງຢ່າງໃດກໍຕາມ, ຖ້າຍິງໜຸ່ມເລືອກທີ່ຈະເຮັດໂຄງການໃດໜຶ່ງທີ່ໃຫຍ່ສົມຄວນເຊິ່ງກ່ຽວພັນຫລາຍກວ່າຄຸນຄ່າໜຶ່ງ, ແລ້ວນາງຄວນໃຊ້ເວລາຢ່າງນ້ອຍ 10 ຊົ່ວໂມງສຳລັບຄຸນຄ່າແຕ່ລະຢ່າງໃນໂຄງການນັ້ນ. ສິບຊົ່ວໂມງອັນດຽວກັນນັ້ນແມ່ນສຳລັບໂຄງການໜຶ່ງທີ່ມີຄຸນຄ່າເທົ່ານັ້ນ.
- ກຸ່ມຍິງໜຸ່ມສາມາດເຮັດໂຄງການຫລາຍຢ່າງນຳກັນໄດ້. ເຖິງຢ່າງໃດກໍຕາມ, ຍິງໜຸ່ມແຕ່ລະຄົນຕ້ອງໄດ້ໃຊ້ເວລາຢ່າງນ້ອຍສິບຊົ່ວໂມງຖ້ານາງຈະໃຊ້ໂຄງການນັ້ນສຳລັບ ໂຄງການຄວາມກ້າວໜ້າສ່ວນຕົວ.
- ສິ່ງທີ່ດີທີ່ຍິງໜຸ່ມໄດ້ເຮັດຢູ່ບ້ານ, ຢູ່ໂບດ, ຢູ່ໂຮງຮຽນ, ຢູ່ຫ້ອງຮຽນສາດສະໜາ, ແລະ ຢູ່ໃນຂຸມຊຸນກໍສາມາດເອົາມາໃຊ້ສຳລັບລາຍການຄວາມກ້າວໜ້າສ່ວນຕົວໄດ້ ເມື່ອໄດ້ຮັບຄວາມເຫັນຊອບຈາກພໍ່ແມ່ ຫລື ຜູ້ນຳຂອງກຸ່ມຍິງໜຸ່ມ.

ຖ້າຍິງໜຸ່ມໄດ້ເຮັດລາຍການເພື່ອຄວາມກ້າວສ່ວນຕົວສຳເລັດກ່ອນນາງໄປເຂົ້າຮ່ວມສະມາຄົມສະຕີສົງເຄາະ, ນາງກໍສາມາດມີສ່ວນຮ່ວມໃນອົງການຂອງກຸ່ມຍິງໜຸ່ມໄດ້ຢູ່ຕໍ່ໄປ. ນາງສາມາດເຮັດສິ່ງທີ່ເປັນປະສົບການ ແລະ ໂຄງການທີ່ມີຄຸນຄ່າໄດ້ຕື່ມອີກ, ຂຽນຊີວະປະຫວັດ, ອ່ານພະຄຳພີນຳນອນ, ເຮັດໜ້າທີ່ມອບໝາຍຂອງການ

ເປັນຜູ້ນຳ, ແລະ ຊ່ອຍຍິງໜຸ່ມຄົນອື່ນຜູ້ທີ່ກຳລັງເຮັດລາຍການຄວາມກ້າວໜ້າສ່ວນຕົວ ຂອງເຂົາຢູ່.

ຖ້າຍິງໜຸ່ມເຮັດຂໍ້ກຳນົດຄວາມກ້າວໜ້າສ່ວນຕົວຍັງບໍ່ແລ້ວເທື່ອກ່ອນຈາກອົງການ ຍິງໜຸ່ມໄປ, ນາງສາມາດເຮັດຕໍ່ໄປໄດ້ເພື່ອຈະໄດ້ຮັບການຮັບຮູ້ຄວາມເປັນຍິງໜຸ່ມ ກ່ອນນາງມີອາຍຸໄດ້ 19 ປີ.

ຄວາມກ້າວໜ້າສ່ວນຕົວໃນກິດຈະກຳຂອງຊາວໜຸ່ມ

ກິດຈະກຳສຳລັບຄວາມກ້າວໜ້າສ່ວນຕົວອາດສາມາດຈັດຂຶ້ນໄດ້ເປັນບາງຄັ້ງໃນຄືນ ເຮັດກິດຈະກຳສຳລັບຊາວໜຸ່ມ. ກິດຈະກຳເປັນກຸ່ມເຊັ່ນນັ້ນຄວນຖືກວາງແຜນ ແລະ ຄັດເລືອກເປັນຢ່າງດີ ແລະ ເພື່ອໃຫ້ແນ່ໃຈว່າ ລາຍການເພື່ອຄວາມກ້າວໜ້າສ່ວນຕົວ ຈະເປັນສິ່ງສ່ວນຕົວສຳລັບຍິງໜຸ່ມແຕ່ລະຄົນ.

ເຄື່ອງໝາຍ, ໃບຍ້ອງຍໍ, ແລະ ການຮັບຮູ້

ເມື່ອຍິງໜຸ່ມເຮັດສິ່ງທີ່ເປັນປະສົບການ ແລະ ໂຄງການຕ່າງໆສຳລັບຄຸນຄ່າແຕ່ລະ ຢ່າງແລ້ວ, ນາງຈະໄດ້ຮັບເຄື່ອງໝາຍ (36654), ເຊິ່ງນາງຈະວາງມັນໄວ້ເທິງໃບຍ້ອງຍໍ ສຳລັບຄວາມສຳເລັດຜົນສ່ວນຕົວຢູ່ຫ້າຍປົ້ມຂອງນາງ. ການຮັບຮູ້ນີ້ສຳລັບຄວາມ ກ້າວໜ້າຂອງນາງສາມາດມອບໃຫ້ຢູ່ໃນຫ້ອງຮອນຂອງກຸ່ມຍິງໜຸ່ມໄດ້.

ເມື່ອຍິງໜຸ່ມໄດ້ເຮັດທຸກສິ່ງທີ່ຢູ່ໃນຄຸນຄ່າທັງເຈັດສຳເລັດ ແລະ ໄດ້ຮັບການສຳພາດ ຈາກອະທິການແລ້ວ, ນາງຈະໄດ້ຮັບການຮັບຮູ້ຄວາມເປັນຍິງໜຸ່ມ. ການຮັບຮູ້ນີ້ ຮ່ວມດ້ວຍໃບຍ້ອງຍໍ (36651) ແລະ ກີ່ສາຍຄໍຂອງຄວາມເປັນຍິງໜຸ່ມ ເປັນສີທອງ ຫລື ນ້ຳເງິນ (ສີທອງ, 36652; ນ້ຳເງິນ, 36653). ຜູ້ໜຶ່ງໃນຝ່າຍອະທິການຈະສະເໜີການ ຮັບຮູ້ນີ້ຢູ່ກອງປະຊຸມສິນລະລຶກ.

ລາງວັນ ແລະ ໃບຍ້ອງຍໍ ມີຈຳໜ່າຍຢູ່ທີ່ສູນຈຳໜ່າຍຂອງສາດສະໜາຈັກ ໂດຍໃຊ້ ເງິນຂອງຫວອດ ຫລື ສາຂາ, ເຊິ່ງຍິງໜຸ່ມ ຫລື ພໍ່ແມ່ຂອງເຂົາບໍ່ຈຳເປັນຕ້ອງຈ່າຍ.

ຂໍ້ຮຽກຮ້ອງຄວາມກ້າວໜ້າສ່ວນຕົວສຳລັບຜູ້ນຳ

ຜູ້ນຳທີ່ມີສ່ວນຮ່ວມໃນລາຍການເພື່ອຄວາມກ້າວໜ້າສ່ວນຕົວທີ່ເຂົ້າໃຈລາຍການ ຄົງກ່າວເປັນຢ່າງດີ ແລະ ໄດ້ເປັນຕົວຢ່າງທີ່ດີໃຫ້ແກ່ຍິງໜຸ່ມເພື່ອເຮັດຕາມຜູ້ນຳ ເຂົາເຈົ້າກໍສາມາດໄດ້ຮັບການຮັບຮູ້ຄວາມເປັນຍິງໜຸ່ມດີກັນຫລັງຈາກເຂົ້າເຈົ້າ:

- ຮັບໃຊ້ເປັນເວລາໜຶ່ງປີໃນຖານະເປັນຜູ້ນຳຂອງຍິງໜຸ່ມ.
- ເຮັດສາມຢ່າງທີ່ເປັນປະສົບການຢູ່ໃນແຕ່ລະຄຸນຄ່າເຈັດຢ່າງສຳເລັດ.
- ເຮັດໂຄງການສາມຢ່າງທີ່ມີຄ່າສຳເລັດ.

ການປັບປຸງໃຫ້ເຂົ້າກັບບຸກຄົນ ແລະ ຄວາມຕ້ອງການໃນທ້ອງຖິ່ນ

ປະສົບການທີ່ມີຄ່າ ແລະ ໂຄງການທີ່ມີຄ່າສາມາດດັດແປງໃຫ້ເຂົ້າກັບສະພາບການສ່ວນຕົວ ຫລື ທ້ອງຖິ່ນໄດ້, ຕະຫລອດທັງຄວາມສົນໃຈ, ຄວາມຕ້ອງການ ໂດຍໄດ້ຮັບຄວາມເຫັນຊອບກ່ອນຈາກພໍ່ແມ່ ແລະ ຜູ້ນຳຂອງກຸ່ມຍິງໜຸ່ມ. ເມື່ອມີການປ່ຽນແປງ ຫລື ຍົກເວັ້ນສຳລັບບຸກຄົນໃດບຸກຄົນໜຶ່ງ, ຜູ້ນຳຄວນພິຈາລະນາຢ່າງຖ້ວນຖີ່ເຖິງຜົນຂອງການປ່ຽນແປງທີ່ອາດກະທົບກະເທືອນຕໍ່ຍິງໜຸ່ມຄົນອື່ນໆ. ຫລັງຈາກພໍ່ແມ່ ແລະ ຜູ້ນຳໄດ້ພິຈາລະນາຢ່າງຖ້ວນຖີ່ແລ້ວ ເຂົາເຈົ້າສາມາດດັດແປງມັນໄດ້ ເພື່ອໃຫ້ເໝາະສົມກັບຄວາມຕ້ອງການຂອງຍິງໜຸ່ມຜູ້ພິການ ຫລື ຜູ້ປັນຍາອ່ອນ, ເພື່ອໃຫ້ເໝາະສົມກັບວັດທະນະທຳ, ຫລື ຄວາມຕ້ອງການຂອງບຸກຄົນ, ຫລື ເພື່ອໃຫ້ຍິງໜຸ່ມຜູ້ບໍ່ໄດ້ເປັນສະມາຊິກມີສ່ວນຮ່ວມນຳ.

ຖ້າຍິງໜຸ່ມຄົນໃດຄົນໜຶ່ງໄດ້ເຂົ້າມາຮ່ວມສາດສະໜາຈັກ ຫລື ກາຍເປັນສະມາຊິກທີ່ເຂັ້ມແຂງໃນອົງການຍິງໜຸ່ມຫລັງຈາກອາຍຸ 16 ປີ, ຂໍ້ກຳນົດສຳລັບລາຍການເພື່ອຄວາມກ້າວໜ້າສ່ວນຕົວແມ່ນ (1) ຄຳລົງຊີວິດຕາມມາດຕະຖານຢູ່ໃນປື້ມ *ສຳລັບຄວາມເຂັ້ມແຂງຂອງຊາວໜຸ່ມ*, ອັນທີ່ອະທິການ ຫລື ປະທານສາຂາໄດ້ບົ່ງບອກຢູ່ໃນຕອນສຳພາດ, (2) ເຮັດສິ່ງທີ່ເປັນປະສົບການທີ່ມີຄ່າສາມຢ່າງຢູ່ໃນແຕ່ລະຄຸນຄ່າເຈັດຢ່າງໃຫ້ສຳເລັດ; ແລະ (3) ເຮັດໂຄງການຢູ່ໃນແຕ່ລະ

ຄຸນຄ່າເຈັດຢ່າງໃຫ້ສຳເລັດ. ຂໍ້ກຳນົດເຫລົ່ານີ້ ກໍສາມາດໃຊ້ກັບຍິງໜຸ່ມຜູ້ຢູ່ໃນສະພາບການອື່ນໆໄດ້ຄືກັນ ອີງຕາມການພິຈາລະນາໂດຍຜູ້ນຳຂອງກຸ່ມຍິງໜຸ່ມ.

ໜ້າທີ່ຮັບຜິດຊອບຂອງຜູ້ນຳ

ຜູ້ນຳຂອງກຸ່ມຍິງໜຸ່ມຄວນພົບກັບຍິງໜຸ່ມຜູ້ທີ່ເຂົ້າມາຮ່ວມອົງການຍິງໜຸ່ມ ແລະ ພໍ່ແມ່ຂອງນາງ. ຄົນໜຶ່ງໃນຝ່າຍປະຫານຂອງກຸ່ມຍິງໜຸ່ມກໍສາມາດໄປຮ່ວມນຳ. ຜູ້ນຳຄວນມອບປຶ້ມ *Young Women Personal Progress* ແລະ ອະທິບາຍກ່ຽວກັບ ໂຄງການໃຫ້ນາງຟັງ. ເຂົາເຈົ້າຄວນຊຸກຍູ້ພໍ່ແມ່ໃຫ້ຊ່ວຍລູກສາວຂອງເຂົາເຈົ້າໃຫ້ເລືອກ ແລະ ເຮັດສິ່ງທີ່ເປັນປະສົບການ ແລະ ໂຄງການຄວາມກ້າວໜ້າສ່ວນຕົວ. ເຂົາເຈົ້າກໍຄວນເຊື້ອເຊີນພໍ່ແມ່ໄປຮ່ວມລາຍການທັງໝົດທີ່ລູກສາວຂອງເຂົາເຈົ້າມີສ່ວນຮ່ວມນຳອີກ.

ເມື່ອຍິງໜຸ່ມໄດ້ເຮັດລາຍການເພື່ອຄວາມກ້າວໜ້າສ່ວນຕົວສຳເລັດທຸກຢ່າງແລ້ວ, ອະທິການຈະສຳພາດນາງ, ໂດຍໃຊ້ມາດຕະຖານຢູ່ໃນປຶ້ມ *ສຳລັບຄວາມເຂັ້ມແຂງຂອງຊາວໜຸ່ມ* ເປັນແນວທາງ. ສິ່ງນີ້ສາມາດເປັນສ່ວນໜຶ່ງຂອງການຮັບການສຳພາດປະຈຳປີ ຫລື ແຕ່ລະຫົກເດືອນຂອງນາງກໍໄດ້. ອະທິການຈະເປັນຜູ້ພິຈາລະນາການມີຄ່າຄວນຂອງຍິງໜຸ່ມເພື່ອຮັບເອົາການຮັບຮູ້ຄວາມເປັນຍິງໜຸ່ມ.

ຄົນໜຶ່ງໃນຝ່າຍອະທິການໄດ້ຖືກຊຸກຍູ້ໃຫ້ໃຊ້ຊ່ວງເວລາສຳພາດຕາມປົກກະຕິກັບຍິງໜຸ່ມ ເພື່ອຈະທົບທວນເຖິງຄວາມກ້າວໜ້າຂອງຍິງໜຸ່ມແຕ່ລະຄົນ. ປະຫານສະເຕກຄວນສອບຖາມອະທິການເລື້ອຍໆກ່ຽວກັບຄວາມຜາສຸກ ແລະ ຄວາມກ້າວໜ້າຂອງກຸ່ມຍິງໜຸ່ມຢູ່ໃນຫວອດຂອງເຂົາເຈົ້າ.

ກິດຈະກຳສຳລັບຊາວໜຸ່ມ

ຈຸດປະສົງ

ກຸ່ມຊາຍໜຸ່ມ ແລະ ກຸ່ມຍິງໜຸ່ມຄວນເຮັດກິດຈະກຳປະຈຳອາທິດທີ່ເອີ້ນว่า ກິດຈະກຳສຳລັບຊາວໜຸ່ມ, ຍົກເວັ້ນແຕ່ການເດີນທາງ ຫລື ຂໍ້ຈຳກັດອື່ນເຮັດໃຫ້ຈັດກິດຈະກຳບໍ່ໄດ້ເທົ່ານັ້ນ. ກິດຈະກຳສຳລັບຊາວໜຸ່ມທີ່ວາງແຜນເປັນຢ່າງດີຈະມີບົດບາດອັນສຳຄັນໃນຊີວິດຂອງຊາວໜຸ່ມ. ກິດຈະກຳສຳລັບຊາວໜຸ່ມຈະໃຫ້ໂອກາດເຂົາເຈົ້າໄດ້ພົບກັນໃນແບບເຂົ້າຮ່ວມສັງຄົມ, ນຳໃຊ້ຫລັກທຳພະກິດຕິຄຸນທີ່ໄດ້ສຶດສອນຢູ່ມື້ວັນອາທິດ, ເພີ່ມຄວາມເຂັ້ມແຂງໃຫ້ແກ່ປະຈັກພະຍານຂອງເຂົາ, ໃຫ້ການຮັບໃຊ້, ພັດທະນາຄວາມສຳພັນ ແລະ ການເວົ້າລົມສົນທະນາອັນມີປະໂຫຍດ, ແລະ ເອື້ອມມືອອກໄປຊ່ວຍຊາວໜຸ່ມຜູ້ທີ່ບໍ່ແຂ້ມແຂງ. ກິດຈະກຳສຳລັບຊາວໜຸ່ມກໍຍັງຊ່ວຍເຂົາໃຫ້ໄດ້ຮັບລາງວັນໜ້າທີ່ຕໍ່ພະເຈົ້າ ແລະ ການຮັບຮູ້ຄວາມເປັນຍິງໜຸ່ມນຳອີກ.

ການວາງແຜນ

ພາຍໃຕ້ການນຳຊຶ້ນຳຂອງອະທິການ, ຝ່າຍປະທານຂອງກຸ່ມຊາຍໜຸ່ມ ແລະ ກຸ່ມຍິງໜຸ່ມປະຈຳຫວອດ ຈະເປັນຜູ້ຄູແລກິດຈະກຳສຳລັບຊາວໜຸ່ມ. ເຂົາເຈົ້າອາດໄດ້ຮັບຄວາມຊ່ວຍເຫລືອຈາກຝ່າຍປະທານຫ້ອງ, ຄູສອນ, ແລະ ຜູ້ຊຸ່ຍວຍານ.

ແຜນຂອງເຂົາເຈົ້າຈະຕ້ອງໄດ້ຮັບການເຫັນຊອບຢູ່ໃນການປະຊຸມຄະນະກຳມະການ ຊາວໜຸ່ມນຳຝ່າຍອະທິການ.

ຈຳນວນ ແລະ ໂຄງร່າງກິດຈະກຳສຳລັບຊາວໜຸ່ມ

ກິດຈະກຳສຳລັບຊາວໜຸ່ມຈະຈັດຂຶ້ນໃນຕອນກາງເວັນ ຫລື ຕອນຄ່ຳໃນວັນທີ່ນອກເໜືອໄປຈາກວັນອາທິດ ແລະ ວັນຈັນ, ຖ້າເປັນໄປໄດ້, ຈະຈັດໃນວັນ, ເວລາ, ແລະ ສະຖານທີ່ດຽວກັນນັ້ນທຸກເທື່ອ. ໂດຍທົ່ວໄປແລ້ວ, ກິດຈະກຳສຳລັບຊາວໜຸ່ມຈະໃຊ້ເວລາ 1 ຫາ 1 ຊົ່ວໂມງເຄິ່ງ ແລະ ແຍກອອກເປັນຫລາຍສ່ວນດັ່ງຕໍ່ໄປນີ້:

- ພິທີເປີດ (10 ຫາ 15 ນາທີ)
- ກິດຈະກຳຫ້ອງຮຽນ ຫລື ຂອງກຸ່ມຖານະປະໂລຫິດ (30 ຫາ 75 ນາທີ)
- ກິດຈະກຳຝຶກຝົນ ຫລື ກິດຈະກຳດ້ານສັງຄົມ (ເລືອກເຮັດໄດ້; 30 ນາທີ)

ພິທີເປີດ. ຜູ້ໜຶ່ງໃນຝ່າຍອະທິການ ຫລື ຝ່າຍປະທານຂອງກຸ່ມຊາຍໜຸ່ມ ຫລື ກຸ່ມຍິງໜຸ່ມ ຈະເປັນຜູ້ຄວບຄຸມພິທີເປີດ. ຝ່າຍປະທານຫ້ອງກຸນລະສະຕີ ແລະ ຜູ້ລອງອະທິການສຳລັບກຸ່ມປະໂລຫິດຈະປ່ຽນຜຽນກັນຄຳເນີນພິທີເປີດ. ພິທີເປີດຄວນຮ່ວມດ້ວຍເພງສວດ ແລະ ການອະທິຖານ ແລະ ກໍສາມາດຮ່ວມການປາໄສໃສ່ນຳກໍໄດ້, ເພງພິເສດ, ຝຶກຮ້ອງເພງໃໝ່, ແລະ ໂອກາດທີ່ຈະໃຫ້ຊາວໜຸ່ມໄດ້ແບ່ງປັນພອນສະຫວັນ ແລະ ປະຈັກພະຍານຂອງເຂົາ.

ກິດຈະກຳຫ້ອງຮຽນ ຫລື ຂອງກຸ່ມຖານະປະໂລຫິດ. ກິດຈະກຳທີ່ກຸ່ມຖານະປະໂລຫິດແຫ່ງອາໂລນ ແລະ ກຸ່ມຍິງໜຸ່ມເຮັດນຳກັນປົກກະຕິແລ້ວຈະຈັດຂຶ້ນເດືອນລະເທື່ອ. ສ່ວນອາທິດອື່ນໆນັ້ນຈະຖືກໃຊ້ເຮັດກິດຈະກຳສຳລັບຫ້ອງຍິງໜຸ່ມ ແລະ ກິດຈະກຳຂອງກຸ່ມຖານະປະໂລຫິດແຫ່ງອາໂລນທີ່ແຍກກັນເຮັດ. ບາງຄັ້ງບາງຄາວກໍສາມາດຈັດໃຫ້ຫ້ອງຍິງໜຸ່ມ ກັບກຸ່ມຖານະປະໂລຫິດແຫ່ງອາໂລນເຮັດກິດຈະກຳນຳກັນໄດ້, ຮ່ວມທັງກິດຈະກຳທີ່ໃຫ້ພໍ່ແມ່ ຫລື ຄອບຄົວມີສ່ວນຮ່ວມນຳ. ບາງຄັ້ງບາງຄາວ, ໃນເດືອນທີ່ມີຫ້າອາທິດ, ຫວອດ ຫລື ສາຂາກໍສາມາດຈັດກິດຈະກຳສຳລັບທຸກຄົນໃນຄອບຄົວຂຶ້ນໄດ້. ກິດຈະກຳເຊັ່ນນັ້ນຈະຕ້ອງຈັດຂຶ້ນພາຍໃຕ້ການຊີ້ນຳຂອງຄະນະກຳມະການກິດຈະກຳ.

- ກິດຈະກຳທີ່ກຸ່ມຖານະປະໂລຫິດແຫ່ງອາໂລນ ແລະ ກຸ່ມຍິງໜຸ່ມເຮັດນຳກັນເດືອນລະເທື່ອເປັນໂອກາດໃຫ້ຊາວໜຸ່ມທຸກຄົນຢູ່ໃນຫວອດ, ອາຍຸ 12 ຫາ 18, ມາເຕົ້າໂຮມກັນເຮັດສິ່ງທີ່ເປັນປະໂຫຍດ, ບໍ່ແມ່ນການນັດທ່ຽວແບບຊູ້ສາວ, ໃຫ້ເຂົາເຈົ້າເຮັດວຽກງານ ແລະ ຮ່ຳຮຽນນຳກັນ ແລະ ຊຸກຍູ້ເຊິ່ງກັນແລະກັນໃນການດຳລົງຊີວິດຕາມຫລັກທຳພະກິດຕິຄຸນ. ກິດຈະກຳທີ່ຊາວໜຸ່ມເຮັດນຳກັນ ຈະຕ້ອງຖືກວາງແຜນ ແລະ ໄດ້ຮັບການທົບທວນຢູ່ໃນການປະຊຸມຄະນະກຳມະການຊາວໜຸ່ມນຳຝ່າຍອະທິການ.

- ກິດຈະກຳຂອງກຸ່ມຍິງໜຸ່ມຄວນຮ່ວມດ້ວຍປະສົບການຈາກດ້ານຕ່າງໆດັ່ງຕໍ່ໄປນີ້: ການຮັບໃຊ້; ວຽກງານໃນບ້ານ; ການຫລິ້ນດົນຕີ, ການກ່າວປາໄສ, ແລະ ການສະແດງລະຄອນ; ການເຕັ້ນລຳ; ການສະແດງສິນລະປະວັນນະຄະດີ ແລະ ການເບິ່ງຮູບພາບ; ການໄປນອນປ່າ; ການຝຶກກີລາ ແລະ ການຝຶກຫາຍ; ແລະ ຄວາມກ້າວໜ້າສ່ວນຕົວ. ຍິງໜຸ່ມຄວນຮຽນເອົາວິຊາທີ່ຈະຕຽມເຂົາສຳລັບບົດບາດໃນອະນາຄົດທັງໃນຄອບຄົວ, ສາດສະໜາຈັກ, ແລະ ຊຸມຊົນ. ກິດຈະກຳຄວນຊ່ວຍຍິງໜຸ່ມແຕ່ລະຄົນໃຫ້ເຂົ້າໃຈ ແລະ ເອົາມາຕື່ມໃສ່ກັບຄຸນຄ່າຂອງຍິງໜຸ່ມ.

- ກິດຈະກຳຂອງກຸ່ມຖານະປະໂລຫິດແຫ່ງອາໂລນຄວນຊ່ວຍຊາຍໜຸ່ມແຕ່ລະຄົນໃຫ້ເຮັດຈຸດປະສົງຂອງກຸ່ມຖານະປະໂລຫິດແຫ່ງອາໂລນສຳເລັດຄົບຖ້ວນ ໂດຍການມອບປະສົບການໃຫ້ເຂົາພັດທະນາໃນສີ່ດ້ານ ດັ່ງຕໍ່ໄປນີ້ ເຊິ່ງມີບັນຈຸ

ຢູ່ໃນຄູ່ມື *Aaronic Priesthood: Fulfilling Our Duty to God:* ການພັດທະນາທາງວິນຍານ; ການພັດທະນາທາງຮ່າງກາຍ; ການພັດທະນາເລື່ອງການສຶກສາ, ສ່ວນບຸກຄົນ, ແລະ ວິຊາອາຊີບ; ແລະ ການພັດທະນາການເປັນພົນລະເມືອງ ແລະ ດ້ານສັງຄົມ.

ໃນບ່ອນທີ່ມີກິດຈະກຳລູກເສືອ ແລະ ຖືກອະນຸຍາດໃຫ້ໃຊ້ເປັນພາກສ່ວນໜຶ່ງ ສຳລັບກິດຈະກຳຂອງກຸ່ມຖານະປະໂລຫິດແຫ່ງອາໂລນ, ຊາຍໜຸ່ມຄວນຂຶ້ນຂວາຍເພື່ອໃຫ້ໄດ້ຫລຽນກຽດຕິຍົດ, ການເລື່ອນຕຳແໜ່ງ, ແລະ ການພັດທະນາຄຸນສົມບັດ ແລະ ບຸກຄະລິກລັກສະນະທີ່ສອນໃນກິດຈະກຳລູກເສືອ.

ກິດຈະກຳຝຶກຝົນ ຫລື ກິດຈະກຳດ້ານສັງຄົມ. ກິດຈະກຳສຳລັບຊາວໜຸ່ມແມ່ນຮ່ວມດ້ວຍເວລາທີ່ໃຫ້ກຸ່ມຊາຍໜຸ່ມ ແລະ ກຸ່ມຍິງໜຸ່ມພົບປະສັງສັນກັນຫລັງຈາກກິດຈະກຳໃນຫ້ອງ ຫລື ໃນກຸ່ມຖານະປະໂລຫິດຂອງເຂົາ. ຄວນໃຊ້ເວລານີ້ເພື່ອທົບທວນ ຫລື ຈັດຕຽມສຳລັບລາຍການພິເສດ, ຝຶກຝົນ ຫລື ຫລິ້ນກີລາ, ຫລື ນ່ວນຊື່ນນຳກັນໃນກິດຈະກຳທາງສັງຄົມ.

ຫົວຂໍ້ປະຈຳປີ

ລາຍລະອຽດຈະຖືກສົ່ງມາໃຫ້ແຕ່ລະປີຈາກສູນກາງໃຫຍ່ຂອງສາດສະໜາຈັກຫາຜູ້ນຳຂອງກຸ່ມຖານະປະໂລຫິດ ແນະນຳຫົວຂໍ້ປະຈຳປີໃຫ້ແກ່ກິດຈະກຳສຳລັບຊາວໜຸ່ມທີ່ຈະຕ້ອງສົນທະນາກັບຜູ້ນຳຂອງຊາວໜຸ່ມ. ຫົວຂໍ້ອາດຖືກໃຊ້ເພື່ອເນັ້ນກິດຈະກຳດ້ານເຊັ່ນການເຕັ້ນລຳ, ການສະແດງລະຄອນ, ການກ່າວປາໄສ, ການຫລິ້ນກີລາ, ການຮ້ອງເພງ, ຫລື ການຮັບໃຊ້. ຄວນຈັດຕຽມສຳລັບກິດຈະກຳດ້ານກ່າວລະຫວ່າງເຮັດກິດຈະກຳສຳລັບຊາວໜຸ່ມ.

ແຫລ່ງອ້າງອີງເພີ່ມເຕີມ

Activity Book (31455) ບັນຈຸກິດຈະກຳຫລາຍກວ່າ 300 ຢ່າງ ທີ່ສາມາດຊ່ວຍໄດ້ໃນຈຸດປະສົງຂອງຖານະປະໂລຫິດ ແລະ ໃນຄຸນຄ່າຂອງຍິງໜຸ່ມ. ວາລະສານຂອງສາດສະໜາຈັກກໍມີແນວຄິດຫລາຍຢ່າງຄືກັນທີ່ສາມາດເອົາມານຳໃຊ້ໄດ້ສຳລັບກິດຈະກຳສຳລັບຊາວໜຸ່ມ.

ຕໍ່ໄປນີ້ຄືຕົວຢ່າງຂອງໃບວາງແຜນກິດຈະກຳສຳລັບຊາວໜຸ່ມທີ່ສາມາດເອົາມາໃຊ້ໄດ້:

ໃບວາງແຜນກິດຈະກຳສຳລັບຊາວໜຸ່ມ

ວັນທີຂອງຄືນທີ່ຈະຈັດກິດຈະກຳສຳລັບຊາວໜຸ່ມ: _____

ພິທີເປີດ

ຄວບຄຸມໂດຍ: _____

ດຳເນີນການໂດຍ: _____

ເພງສວດເປີດ: _____

ຜູ້ອະທິຖານເປີດ: _____

ຄົນຕີ (ເພງ, ຝຶກເພງໃໝ່):

_____

_____

ຜູ້ກ່າວຄຳປາໄສ: _____

_____

ກິດຈະກຳຫ້ອງຮຽນ ຫລື ຂອງກຸ່ມຖານະປະໂລຫິດ

_____

_____

_____

ກິດຈະກຳຝຶກຝົນ ຫລື ກິດຈະກຳດ້ານສັງຄົມ (ເລືອກເຮັດໄດ້)

_____

_____

_____

ການສອນຫລັກທຳຂອງການເປັນຜູ້ນຳຕໍ່ຊາວໜຸ່ມ

ສິ່ງ່ວນສຳຄັນຂອງການຕອນຕົວສູ່ຄວາມເປັນຜູ້ໃຫຍ່ຂອງຊາຍໜຸ່ມ ແລະ ຍິງໜຸ່ມ ຄືການພັດທະນາຄວາມຊຳນານ ແລະ ຄຸນສົມບັດຂອງການເປັນຜູ້ນຳ. ຊາວໜຸ່ມໃນທຸກວັນນີ້ຄືພໍ່, ແມ່ ແລະ ຜູ້ນຳຂອງສາດສະໜາຈັກໃນວັນຂ້າງໜ້າ. ຈຸດປະສົງຕົ້ນຕໍຂອງ ໂຄງການເພື່ອຄວາມສຳເລັດຜົນຂອງຖານະປະໂລຫິດແຫ່ງອາໂລນ, ແລະ ຂອງກຸ່ມຍິງໜຸ່ມຄືທີ່ຈະຊ່ວຍຊາວໜຸ່ມໃຫ້ພັດທະນາຄວາມຊຳນານ ແລະ ຄຸນສົມບັດຂອງການເປັນຜູ້ນຳ.

ພໍ່ແມ່ ແລະ ຜູ້ນຳຂອງຊາວໜຸ່ມຄວນໃຊ້ລາຍການເພື່ອຄວາມສຳເລັດຜົນໃນການໃຫ້ປະສົບການຄວາມເປັນຜູ້ນຳແກ່ຊາວໜຸ່ມໃນບ້ານ, ໃນກຸ່ມຖານະປະໂລຫິດ ແລະ ໃນຫ້ອງຮຽນ, ແລະ ໃນກິດຈະກຳສຳລັບຊາວໜຸ່ມ. ຍົກຕົວຢ່າງ, ຊາວໜຸ່ມສາມາດຮຽນຮູ້ກ່ຽວກັບການເປັນຜູ້ນຳໃນບ້ານເມື່ອເຂົາສອນບົດຮຽນຢູ່ໃນການສ້ຽງສັນໃນຄອບຄົວ, ນຳພາຄອບຄົວໃນການສົນທະນາ, ວາງແຜນເຮັດກິດຈະກຳເປັນຄອບຄົວ, ຫລື ຊ່ວຍເຫລືອນ້ອງຊາຍ ຫລື ນ້ອງສາວຂອງເຂົາ. ເຂົາກໍໄດ້ຮຽນຮູ້ກ່ຽວກັບການເປັນຜູ້ນຳຕື່ມອີກເມື່ອເຂົາວາງແຜນ ແລະ ດຳເນີນກິດຈະກຳຢູ່ໃນກຸ່ມຖານະປະໂລຫິດ ແລະ ຢູ່ໃນຫ້ອງຮຽນຂອງກຸ່ມຍິງໜຸ່ມ. ຜູ້ນຳຄວນຫາໂອກາດທີ່ຈະໃຫ້ຊາວໜຸ່ມມີປະສົບການກ່ຽວກັບການເປັນຜູ້ນຳ.

ຜູ້ນຳຂອງກຸ່ມຖານະປະໂລຫິດແຫ່ງອາໂລນ ແລະ ຂອງກຸ່ມຍິງໜຸ່ມມີໜ້າທີ່ຮັບຜິດຊອບສະເພາະທີ່ຈະສອນຄວາມຊຳນານເລື່ອງການເປັນຜູ້ນຳຢູ່ໃນຫ້ອງຮຽນ ແລະ ແກ່ຝ່າຍປະທານຂອງກຸ່ມຖານະປະໂລຫິດ. ຄວາມຊຳນານເຫລົ່ານັ້ນສາມາດສອນໄດ້ຢູ່ໃນການປະຊຸມຂອງຝ່າຍປະທານ.

ຄວນສອນຫລັກທຳຂອງການເປັນຜູ້ນຳດັ່ງຕໍ່ໄປນີ້ໃຫ້ແກ່ຊາວໜຸ່ມ:

- ເຮັດຕາມຕົວຢ່າງຂອງພະຜູ້ຊ່ວຍໃຫ້ລອດ.

- ພັດທະນາບຸກຄະລິກລັກສະນະຂອງຜູ້ນຳດັ່ງນີ້:

  ສັດທາ

  ຄວາມຮັກ

  ການເຊື່ອຟັງ

  ຄວາມສາມັກຄີ

  ການເສຍສະລະ

- ປະຕິບັດໜ້າທີ່ຂອງຜູ້ນຳໃຫ້ສຳເລັດ ດັ່ງນີ້:

  ສະແຫວງຫາການນຳພາ ແລະ ຕັ້ງເປົ້າໝາຍ.

  ວາງແຜນ ແລະ ມອບໝາຍ.

  ຕຽມ ແລະ ໃຊ້ລາຍການປະຊຸມ.

  ດຳເນີນການປະຊຸມຢ່າງມີປະສິດທິພາບ.

  ມີສ່ວນຮ່ວມ ແລະ ດຳເນີນການປະຊຸມສະພາຢ່າງມີປະສິດທິພາບ.

  ຮັກສາຄວາມໄວ້ວາງใจ.

ແຫລ່ງຕ່າງໆທີ່ຊ່ວຍພໍ່ແມ່ ແລະ ຜູ້ນຳເພື່ອສິດສອນຊາຍໜຸ່ມ ແລະ ຍິງໜຸ່ມກ່ຽວກັບການເປັນຜູ້ນຳ ມີຢູ່ໃນພາກທີ 16 "Gospel Teaching and Leadership," ໃນປຶ້ມ *Church Handbook of Instructions, Book 2: Priesthood and Auxiliary Leaders* (35209), ແລະ ໃນປຶ້ມ *Priesthood and Auxiliary Leaders' Guidebook* (31178).

THE CHURCH OF

JESUS CHRIST

OF LATTER-DAY SAINTS

LAOTIAN

4 02366 79331 0

36679 331